ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ມອບ-ໂອນ ສິດນຳໃຊ້ທີ່ດິນໃຫ້ບໍລິສັດ ກຸ່ມດວງຈະເລີນ




ພິທີລົງນາມສັນຍາການ ມອບ-ໂອນ ສິດນຳໃຊ້ທີ່ດິນລະຫວ່າງນະຄອນຫຼວງວຽງຈັນ-ທະນາຄານແຫ່ງ ສປປ ລາວ (ທຫລ) ແລະ ບໍລິສັດ ກຸ່ມດວງຈະເລີນ ພັດທະນາກໍ່ສ້າງ ຈຳກັດຜູ້ດຽວ ໄດ້ຈັດຂຶ້ນໃນວັນທີ 23 ຕຸລາ 2020 ທີ່ໂຮງແຮມແລນມາກ ແມ່ຂອງ ລີເວີໄຊ ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ຄຳວົງ ທິບພະວົງ ຮອງຜູ້ວ່າການ ທຫລ; ທ່ານ ອາດສະພັງທອງ ສີພັນດອນ ຮອງເຈົ້າຄອງນະຄອນຫຼວງວຽງຈັນ ແລະ ທ່ານ ຄຳພາຍ ສີລາຊາ ປະທານບໍລິສັດກຸ່ມດວງຈະເລີນໂດຍຊ້ອງໜ້າການເຂົ້າຮ່ວມເປັນສັກຂີພິຍານຂອງຄະນະນຳ ແລະ ອົງການກ່ຽວຂ້ອງຂອງທັງ 3 ຝ່າຍ.

ທ່ານ ເພັດສະຖາພອນ ແກ້ວວົງວິຈິດ, ຫົວໜ້າຫ້ອງການ ທຫລ ໄດ້ກ່າວວ່າ: ເພື່ອຈັດຕັ້ງຜັນຂະຫຍາຍແຜນການພັດທະນາລະບົບພື້ນຖານໂຄງລ່າງຂອງນະຄອນຫຼວງວຽງຈັນ ເພື່ອຂໍ່ານັບຮັບຕ້ອນການສະເຫຼີມສະຫຼອງການສ້າງຕັ້ງນະຄອນຫຼວງວຽງຈັນຄົບຮອບ 450 ປີ ແລະ ປະຕິບັດນະໂຍບາຍການຫັນຊັບສິນເປັນທຶນ. ດັ່ງນັ້ນ, ອົງການປົກຄອງນະຄອນຫຼວງວຽງຈັນຈຶ່ງໄດ້ມີໂຄງການສ້າງເສັ້ນທາງເບຕົງ 450 ປີ (ແຕ່ 4 ແຍກດົງໂດກໄປຫາໜ້າສາງທ່ານາແລ້ງ) ເພື່ອສ້າງຄວາມສະດວກໃນການສັນຈອນໄປມາ ແລະ ຫຼຸດຜ່ອນຄວາມແອອັດພາຫະນະໃນຕົວເມືອງໂດຍແມ່ນບໍລິສັດ ກຸ່ມດວງຈະເລີນ ເປັນຜູ້ຮັບເໝົາກໍ່ສ້າງ. ໃນການຈັດຕັ້ງປະຕິບັດໂຄງການດັ່ງກ່າວ ອົງການປົກຄອງນະຄອນຫຼວງວຽງຈັນໄດ້ກູ້ຢືມທຶນຈາກ ທຫລ ເພື່ອນຳໃຊ້ເຂົ້າໃນໂຄງການດັ່ງກ່າວ.

ທ່ານ ປະທານບໍລິສັດ ກຸ່ມດວງຈະເລີນ ໄດ້ແຈ້ງໃຫ້ຮູ້ວ່າ: ໃນປີ 2008 ລັດຖະບານໄດ້ອອກຂໍ້ຕົກລົງ ແລະ ແຈ້ງການຂອງລັດຖະບານຫຼາຍສະບັບໂດຍມອບໃຫ້ນະຄອນຫຼວງວຽງຈັນເປັນເຈົ້າຂອງໂຄງການກໍ່ສ້າງທາງ 450 ປີທີ່ມີຄວາມຍາວ 20,3 ກິໂລແມັດ. ແຫຼ່ງທຶນຊຳລະມູນຄ່າກໍ່ສ້າງເສັ້ນທາງ, ລັດຖະບານກໍ່ຄືນະຄອນຫຼວງວຽງຈັນໄດ້ກຳນົດເອົາດິນໃນເຂດສະຫງວນ 2 ເບື້ອງໆລະ 50 ແມັດ ເພື່ອເປັນທຶນຊຳລະເງິນກູ້ແກ່ ທຫລ ແລະ ຜົນການຈັດຕັ້ງການຫັນທີ່ດິນເປັນທຶນໃນໄລຍະຜ່ານມາ, ທຫລ ຮ່ວມກັບນະຄອນຫຼວງວຽງຈັນໄດ້ຂາຍທີ່ດິນດັ່ງກ່າວໃນໄລຍະ 10 ປີ ຂາຍໄດ້ພຽງແຕ່ 20% ທີ່ຕິດກັບຕົວເມືອງ ແລະ ຕອນດິນທີ່ງາມ, ສ່ວນທີ່ຍັງເຫຼືອແມ່ນບໍ່ໄດ້ຂາຍຍ້ອນຫ່າງໄກຕົວເມືອງ, ສະພາບດິນບໍ່ງາມເປັນດິນຫຼຸບ, ບໍ່ມີນ້ຳປະປາ, ບໍ່ມີໄຟຟ້າ, ເປັນທົ່ງນາ, ເປັນໜອງນ້ຳ ແລະ ລາຄາທີ່ໄດ້ກຳນົດໄວ້ຕາມຂໍ້ຕົກລົງ 617/ຈນວ ແມ່ນສູງກວ່າລາຄາທ້ອງຕະຫຼາດໃນປະຈຸບັນເຮັດໃຫ້ບໍ່ມີຄົນສົນໃຈມາຊື້.

 

ດ້ວຍເຫດນັ້ນ, ອົງການນະຄອນຫຼວງວຽງຈັນ, ທຫລ ໄດ້ປະຊຸມຮ່ວມປຶກສາຫາລືກັນແກ້ໄຂໜີ້ສິນຫຼາຍຄັ້ງ ແລະ ມີຄວາມເປັນເອກະພາບໄລ່ລຽງໜີ້ສິນທີ່ນະຄອນຫຼວງວຽງຈັນ ຍັງຄ້າງຊໍາລະກັບ ທຫລ ຜ່ານມາສະນັ້ນຈຶ່ງໄດ້ມີການເຊັນສັນຍາວ່າດ້ວຍການແກ້ໄຂໜີ້ສິນບ້ວງດັ່ງກ່າວໃຫ້ສໍາເລັດລະຫວ່າງນະຄອນຫຼວງວຽງຈັນກັບ ທຫລ ໂດຍບໍລິສັດ ດວງຈະເລີນ ຈະເປັນຜູ້ຊໍາລະທັງຕົ້ນທຶນ ແລະ ດອກເບ້ຍໃຫ້ ທຫລ ຕາມສັນຍາທີ່ໄດ້ກໍານົດໄວ້. ໃນຕໍ່ໜ້ານີ້; ພາຍຫຼັງທີ່ບໍລິສັດດັ່ງກ່າວໄດ້ຮັບໃບຕາດິນແລ້ວ, ບໍລິສັດເປັນຜູ້ຮັບພາລະໃນການລົງທຶນສືບຕໍ່ເປັນຕົ້ນຖົມດິນ, ເອົານໍ້າປະປາ, ໄຟຟ້າ, ສ້າງເສັ້ນທາງເຂົ້າໃສ່ດິນແຕ່ລະເຂດຄິດວ່າເປັນມູນຄ່າລົງທຶນເພີ່ມຫຼາຍກວ່າ 30 ລ້ານໂດລາຂຶ້ນໄປສ້າງຄວາມເພິ່ງພໍໃຈໃຫ້ຜູ້ທີ່ຈະມາຊື້ດິນ ແລະ ໃຫ້ສາມາດຂາຍດິນໄດ້ໃນຊ່ວງໄລຍະເວລາ 5 ປີ ຕໍ່ໜ້າເພື່ອມາເປັນທຶນຊໍາລະໃຫ້ ທຫລ ໃຫ້ສໍາເລັດໂດຍບໍ່ໄດ້ໃຊ້ງົບປະມານຂອງລັດ.

ໃນພິທີເຊັນສັນຍາ ວ່າດ້ວຍການ ມອບ-ໂອນ ສິດນໍາໃຊ້ທີ່ດິນ 2 ຝາກທາງ (ຖະໜົນ 450 ປີ) ແລະ ຊໍາລະໜີ້ໃຫ້ ທຫລ, ຕາງໜ້າ ທຫລ ໂດຍທ່ານ ຄໍາວົງ ທິບພະວົງ ຮອງຜູ້ວ່າການ ທຫລ; ຕາງໜ້ານະຄອນຫຼວງວຽງຈັນ ໂດຍທ່ານ ອາດສະພັງທອງ ສີພັນດອນ ຮອງເຈົ້າຄອງນະຄອນຫຼວງວຽງຈັນ ແລະ ຕາງໜ້າໃຫ້ບໍລິສັດ ໂດຍທ່ານ ຄໍາຜາຍ ສີລາຊາ ປະທານບໍລິສັດ ກຸ່ມດວງຈະເລີນ. ການມອບ-ຮັບໂອນສິດນໍາໃຊ້ທີ່ດິນໃນໂຄງການຫັນດິນເປັນທຶນຢູ່ຖະໜົນວຽງຈັນ 450 ປີ ຈະເປັນການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງນະຄອນຫຼວງວຽງຈັນ ແລະ ເຂດເນື້ອທີ່ດິນດັ່ງກ່າວຈະໄດ້ຮັບການພັດທະນາມີໂສມໜ້າໃໝ່, ສ້າງໃຫ້ນະຄອນຫຼວງວຽງຈັນມີເຂດພັດທະນາໃໝ່, ເປັນຫົວໜ່ວຍຍຸດທະສາດໜຶ່ງທີ່ເຂັ້ມແຂງຂອງປະເທດ, ເປັນສູນກາງທາງດ້ານການເມືອງ, ຄວາມໝັ້ນຄົງເສດຖະກິດ, ວັດທະນາທໍາ-ສັງຄົມມີຄວາມທັນສະໄໝທາງດ້ານວິທະຍາສາດເຕັກໂນໂລຊີ ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ສ້າງເມືອງທີ່ຂຶ້ນກັບນະຄອນຫຼວງວຽງຈັນໃຫ້ເຂັ້ມແຂງຮອບດ້ານ, ສ້າງບ້ານໃນເຂດຊານເມືອງເປັນບ້ານພັດທະນາ, ມີສະພາບແວດລ້ອມທີ່ສະອາດຂຽວງາມແລະຍືນຍົງ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

# ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນໍາໃຊ້ເງິນກີບ